ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເລກທີ 1179/ກທຄວ

ນະຄອນຫລວງວຽງຈັນ, ວັນທີ22 ສິງຫາ 2017

# ແຈ້ງການ

ເຖິງ: - ເຈົ້າໜ້າທີ່ທະບຽນວິສາຫະກິດ ພະແນກອຸດສາຫະກຳ ແລະການຄ້າແຂວງ, ນະຄອນຫລວງ;

- ເຈົ້າໜ້າທີ່ທະບຽນວິສາຫະກິດ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ;

ເລື່ອງ: ການສ້ອມແປງຄອມພິວເຕີ ແລະ ຕິດຕັ້ງໂປຣແກຣມຄຸ້ມຄອງທະບຽນວິສາຫະກິດ

- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 37/ນຍ, ລົງວັນທີ 24 ຕຸລາ 2006;

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານບໍລິການຂື້ນທະບຽນທະວິສາຫະກິດ ແລະ ການຄຸ້ມຄອງ ຂໍ້ມູນວິສາຫະກິດ ໃຫ້ມີຄວາມສະດວກ ວ່ອງໄວ ແລະ ທັນສະໄໝ, ທັງເປັນການຫລຸດຜ່ອນຄ່າໃຊ້ຈ່າຍ ແລະ ບໍ່ເສຍເວລາໃນການຝາກເຄື່ອງໄປ-ກັບ.

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຖືເປັນກຽດແຈ້ງມາຍັງທ່ານ ກ່ຽວກັບຄອມພິວເຕີທີ່ໄດ້ຕິດຕັ້ງ ໂປຣແກຣມຄຸ້ມຄອງທະບຽນວິສາຫະກິດ ຖ້າຫາກມີການເປ່ເພບໍ່ສາມາດນຳໃຊ້ໄດ້ ໃຫ້ປະຕິບັດດັ່ງນີ້:

1. ກໍລະນີມີຄວາມສາມາດໃນການຕິດຕັ້ງໂປຣແກຣມຄຸ້ມຄອງທະບຽນວິສາຫະກິດ ໃຫ້ປະຕິບັດໄດ້ເລີຍ (ບໍ່ຕ້ອງສົ່ງໃຫ້ກົມ);
2. ກໍລະນີຍັງບໍ່ທັນສາມາດຕິດຕັ້ງໂປຣແກຣມຄຸ້ມຄອງທະບຽນວິສາຫະກິດ ໃຫ້ສ້ອມແປງຄອມພິວເຕີສຳເລັດກ່ອນເຊັ່ນ: ລົງວິນໂດ(Window), ຈາກນັ້ນຈິ່ງເຮັດໃບສະເໜີ ແລະ ນຳສົ່ງຄອມພິວເຕີ ຫາກົມ;
3. ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງແຂວງ, ນະຄອນຫລວງ ຫຼື ເມືອງໃດ ມີຄວາມພ້ອມທາງດ້ານ ໄອທີ(IT)ຢ່າງໜ້ອຍຕ້ອງສາມາດລົງວິນໂດໄດ້(Window)ຢາກຝຶກອົບຮົມເລື່ອງການຕິດຕັ້ງໂປຣແກຣມຄຸ້ມຄອງ ທະບຽນວິສາຫະກິດ ໃຫ້ສະເໜີແຈ້ງລາຍຊື່, ຈຳນວນຄົນ ແລະກຳນົດເວລາທີ່ຈະເຂົ້າຮ່ວມ ໃຫ້ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ. ສຳລັບຄ່າໃຊ້ຈ່າຍ ກິນ, ຢູ່, ເດີນທາງ ແມ່ນພາກສ່ວນທີ່ຈະເຂົ້າຮ່ວມກຸ້ມຕົນເອງ.

ດັ່ງນັ້ນ, ຈິ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າກົມ

ດຣ.ສີນພອງ ພຽນພິນິດ

ຕິດຕໍ່ພົວພັນ:

- ທ່ານ ບຸນຈັນ 02058589001

Scanned by CamScanner